# ວັນປະກາດເອກະລາດ

## 12.10.1945

ກ່ອນໜ້ານີ້ຫລາຍສິບປີ ຄືວັນທີ 12 ຕຸລາ 1945, ໄດ້ມີການໂຮມຊຸມນຸມໃຫຍ່ຢູ່ວຽງຈັນ ເພື່ອປະກາດຄວາມເປັນເອກະລາດຂອງຊາດລາວເຮົາ ເປັນຄັ້ງທຳອິດຈາກແອກປົກຄອງຂອງພວກລ່າເມືອງຂຶ້ນ ແລະ ພວກຮຸກຮານຕ່າງຊາດ. ວັນດັ່ງກ່າວນັ້ນ ໄດ້ເປັນຂີດໝາຍແຫ່ງໄຊຊະນະຂອງການຕໍ່ສູ້ອັນພິລະອາດຫານ, ດ້ວຍຄວາມສາມັກຄີ ແລະ ການເສຍສະຫລະ ອັນໃຫຍ່ຫລວງຂອງກອງທັບ ແລະ ປະຊາຊົນເຮົາພາຍໃຕ້ການນຳພາ ຂອງພັກປະຊາຊົນປະຕິວັດລາວຂອງພວກເຮົາ.

**I. ບັນດາເຫດການສຳຄັນຢູ່ພາຍນອກ ແລະ ພາຍໃນທີ່ສ້າງເງື່ອນໄຂໃຫ້ແກ່ການປະກາດເອກະລາດ 12 ຕຸລາ 1945.**

ໃນທ້າຍສັດຕະວັດທີ 19, ພວກລ່າເມືອງຂຶ້ນຝຣັ່ງໄດ້ເຂົ້າມາຮຸກຮານ ແລະ ຍຶດຄອງເອົາປະເທດເຮົາເປັນຫົວເມືອງຂຶ້ນ. ປະເທດລາວໄດ້ສູນເສຍເອກະລາດ - ປະຊາຊົນລາວໄດ້ຂາດອິດສະລະພາບກາຍເປັນຂ້ອຍຂ້າຂອງຕ່າງຊາດ. ດ້ວຍມູນເຊື້ອບໍ່ຍອມຈຳນົນ, ປະຊາຊົນລາວບັນດາເຜົ່າໄດ້ລຸກຮືຂຶ້ນຕໍ່ສູ້ຕ້ານພວກລ່າເມືອງຂຶ້ນຝຣັ່ງຢ່າງເພື່ອງນິດລຽນຕິດ, ຕັ້ງແຕ່ມື້ທຳອິດທີ່ພວກເຂົາໄດ້ເຂົ້າມາຮອດປະເທດລາວ; ຍິ່ງພວກລ່າເມືອງຂຶ້ນໄດ້ເພີ່ມທະວີການຍຶດຄອງ ແລະ ປຸກລະດົມຫລາຍຂຶ້ນທໍ່ໃດ, ການຕໍ່ສູ້ຂອງປະຊາຊົນບັນດາເຜົ່າຍິ່ງເປີດກວ້າງອອກໄປທົ່ວທຸກແຫ່ງຫົນໃນຂອບເຂດທົ່ວປະເທດ.

- ເຖິງວ່າການຕໍ່ສູ້ໃນໄລຍະນັ້ນບໍ່ໄດ້ມີພັກນຳພາ - ຂາດອາວຸດຍຸດໂທປະກອນອັນຈຳເປັນ ແລະ ໄດ້ຖືກປາບປາມຢ່າງຮ້າຍແຮງ - ປ່າເຖື່ອນກໍ່ຕາມ, ແຕ່ກໍ່ໄດ້ເຮັດໃຫ້ພວກລ່າເມືອງຂຶ້ນຕ້ອງສະທ້ານຢ້ານກົວ ແລະ ຖືກສູນເສຍເປັນຈຳນວນບໍ່ໜ້ອຍ. ອັນສຳຄັນທີ່ສຸດແມ່ນໄດ້ສະແດງໃຫ້ພວກເຂົາເຫັນຄົນລາວ ມີນ້ຳໃຈຮັກຊາດອັນສູງສົ່ງ ແລະ " ຍອມຕາຍດີກວ່າເປັນຂ້ອຍຂ້າຂອງຊາດອື່ນ".
- ພາຍຫລັງມະຫາປະຕິວັດເດືອນຕຸລາ ປີ 1917 ໄດ້ຮັບໄຊຊະນະ ແລະ ສະຫະພາບໂຊວຽດໄດ້ເກີດເປັນລັດສັງຄົມນິຍົມລັດທຳອິດໃນໂລກ ແລະ ພາຍຫລັງທີ່ປະທານ ໂຮ່ຈີມິນ ໄດ້ຄົ້ນພົບສັດຈະທຳທີ່ວ່າ " ຢາກກູ້ຊາດ ແລະ ປົດປ່ອຍຊາດນັ້ນບໍ່ມີເສັ້ນທາງອື່ນໃດນອກຈາກເສັ້ນທາງຂອງການປະຕິວັດກຳມະຊີບ ", ຂະບວນການປະຕິວັດຂອງອິນດູຈີນຕິດພັນກັບຂະບວນການປະຕິວັດໂລກ ແລະ ເຕີບໃຫຍ່ຂື້ນຢ່າງວ່ອງໄວ.
- ປີ 1930 ພັກກອມມູນິດອິນດູຈີນ ໄດ້ກຳເນີດເກີດຂື້ນ, ເຮັດໃຫ້ການຕໍ່ສູ້ຂອງປະຊາຊົນບັນດາປະເທດໃນອິນດູຈີນມີແນວທາງ ແລະ ມີຍຸດທະສາດອັນຈະແຈ້ງ; ການຕໍ່ສູ້ຂອງປະຊາຊົນລາວບັນດາເຜົ່າໄດ້ກ້າວເຂົ້າສູ່ໄລຍະໃໝ່, ດ້ວຍຄຸນນະພາບອັນໃໝ່ພາຍໃຕ້ການນຳພາ - ຊີ້ນຳຂອງອົງຄະນະພັກແຄ້ວນລາວ. ບັນດານັກຮົບກອມມູນິດລຸ້ນທຳອິດຂອງລາວເຮົາໄດ້ເອົາຕົວເຈືອຈານ



สแกนด้วย CamScanner

ເຂົ້າກັບປະຊາຊົນບັນດາເຜົ່າຢູ່ຮາກຖານ ແລະ ໄດ້ດຳເນີນການໂຄສະນາຂົນຂວາຍ ແລະ ຈັດຕັ້ງຮາກຖານປະຕິວັດຂຶ້ນແບບປິດລັບ ຢູ່ຫລາຍບ່ອນເປັນຕົ້ນ ຢູ່ບໍ່ແຮ່, ໂຮງຈັກໂຮງງານ, ໃນໂຮງຮຽນ, ໃນຕົວເມືອງ, ໃນຊົນນະບົດ, ຄ້າຍທະຫານ; ໄດ້ເຕົ້າໂຮມ ແລະ ຈັດຕັ້ງນຳພາປະຊາຊົນ, ບັນດາຊັ້ນຄົນລຸກຂຶ້ນຕໍ່ສູ້ຕ້ານພວກລ່າເມືອງຂຶ້ນຝຣັ່ງຢ່າງພິລະອາດຫານ, ເນື່ອງນິດລຽນຕິດ ແລະ ນັບມື້ນັບເຕີບໃຫຍ່ຂະຫຍາຍຕົວກວ້າງອອກໄປໃນທົ່ວປະເທດ. ໃນຂະນະດຽວກັນນັ້ນການຈັດຕັ້ງນຳພາ - ຊີ້ນຳ ກໍມີລັກສະນະລວມສູນເປັນເອກະພາບມີຍຸດທະວິທີ ທີ່ຄ່ອງແຄ້ວມີຍຸດທະສາດອັນຈະແຈ້ງ ແລະ ມີແກນນຳທີ່ສະຫລຽວສະຫລາດເຂັ້ມແຂງ.

ເມື່ອກາລະໂອກາດໄດ້ມາເຖິງ, ເປັນຕົ້ນແມ່ນໃນປີ 1945 ທີ່ກອງທັບແດງໂຊວຽດໄດ້ຜາບແພ້ພວກຟາດຊິດເຢຍລະມັນ ໃນສົງຄາມໂລກຄັ້ງທີສອງ, ສ່ວນຢູ່ຫວຽດນາມ ການປະຕິວັດເດືອນສິງຫາ ໄດ້ຮັບໄຊຊະນະ ແລະ ສ້າງຕັ້ງ ສາທາລະນະລັດ ປະຊາທິປະໄຕ ຫວຽດນາມຂຶ້ນ ( ໃນວັນທີ 2 / 9 / 1945 ).

ພັກເຮົາໄດ້ເດັດດ່ຽວນຳພາປະຊາຊົນເຮົາ ລຸກຂຶ້ນຍຶດອຳນາດການປົກຄອງໃນທົ່ວປະເທດຈາກກຳມືຂອງພວກຂຸນເສິກຍີ່ປຸ່ນ ແລະ ພວກລ່າເມືອງຂຶ້ນຝຣັ່ງ. ຂະບວນການຍຶດອຳນາດຢູ່ວຽງຈັນ ໄດ້ເລີ່ມຈາກຂະບວນການຕໍ່ສູ້ຂອງກຳມະກອນ ແລະ ຕໍ່ມາ ໃນວັນທີ 23 ສິງຫາ 1945 ຈຶ່ງມີການໂຮມຊຸມນຸມໃຫຍ່ທີ່ມີຄົນເຂົ້າຮ່ວມໝື່ນກວ່າຄົນ ໂດຍມີຕົວແທນຂອງກຳລັງປະຕິວັດເປັນແກນສານນຳພາ ແລະ ປຸກລະດົມມວນຊົນ ສາມັກຄີກັນເດັດດ່ຽວຕໍ່ສູ້ກູ້ເອົາເອກະລາດ ແລະ ອິດສະລະພາບອັນແທ້ຈິງມາໃຫ້ປະເທດຊາດ.

ຈາກເຫດການດັ່ງກ່າວນັ້ນ, ຂະບວນການຍຶດອຳນາດໄດ້ແຜ່ລາມໄປຫລາຍແຂວງ ເປັນຕົ້ນ: ຢູ່ສະຫວັນນະເຂດ ໃນວັນທີ 30 ສິງຫາ, ຢູ່ທ່າແຂກໃນວັນທີ 1 ກັນຍາ; ຢູ່ຊຳເໜືອແຕ່ວັນທີ 26 ສິງຫາ ເຖິງຕົ້ນເດືອນ ຕຸລາ ແລະ ຢູ່ແຂວງອື່ນໆຊຶ່ງໄດ້ສ້າງເງື່ອນໄຂໃຫ້ແກ່ການລຸກຮື້ຂຶ້ນຍຶດອຳນາດຈາກພວກລ່າເມືອງຂຶ້ນ ແລະ ປະກາດຄວາມເປັນເອກະລາດແຫ່ງຊາດ.

ວັນທີ 12 ຕຸລາ 1945 ໄດ້ກາຍເປັນເຫດການທີ່ມີຄວາມໝາຍປະຫວັດສາດຂອງຊາດລາວເຮົາຍ້ອນວ່າແມ່ນມື້ທີ່ມີການໂຮມຊຸມນຸມ, ທີ່ສະໜາມກິລາແຫ່ງຊາດ ( ສະໜາມກິລາເຈົ້າອານຸວົງໃນປະຈຸບັນ ) ເຊິ່ງມີມວນຊົນເຂົ້າຮ່ວມກວ່າ 2 ໝື່ນຄົນ. ໃນມື້ນີ້, ລັດຖະບານລາວອິດສະຫລະໄດ້ເປັນຕົວແທນໃຫ້ແກ່ວົງຄະນະຍາດແຫ່ງຊາດ ປະກາດຄວາມເປັນເອກະລາດຂອງປະເທດລາວ ຕໍ່ໂລກຢ່າງເປັນທາງການ, ປະກາດໂຮມແຜ່ນດິນລາວເປັນເອກະພາບ; ພ້ອມກັນນັ້ນກໍໄດ້ອອກຖະແຫລງການກ່ຽວກັບການປ່ຽນແປງການປົກຄອງ, ລົບລ້າງທຸກງສັນຍາທີ່ລາວໄດ້ເຊັນກັບຝຣັ່ງເສດ, ປະກາດໃຊ້ລັດຖະທຳມະນູນສະບັບທຳອິດ, ປະກາດໃຊ້ທຸງຊາດ ( ທຸງຊາດລາວປັດຈຸບັນ ); ປະກາດແຕ່ງຕັ້ງຄະນະລັດຖະບານຊົ່ວຄາວຊຶ່ງມີສະເດັດເຈົ້າສຸພານຸວົງ ເປັນລັດຖະມົນຕີ ວ່າການກະຊວງການຕ່າງປະເທດ ແລະ ຕໍ່ມາໄດ້ດຳລົງຕຳແໜ່ງເປັນຜູ້ບັນຊາການທະຫານສູງສຸດອີກດ້ວຍ.



สแกนด้วย CamScanner

ການປະກາດເອກະລາດວັນທີ 12 ຕຸລາ 1945 ໄດ້ເຮັດໃຫ້ຊາວໂລກໄດ້ຮັບຮູ້ກ່ຽວກັບຄວາມເປັນຊາດລາວຂອງພວກເຮົາ, ຮັບຮູ້ອະທິປະໄຕ ແລະ ເຂດນໍ້າແດນດິນຂອງລາວ; ພ້ອມກັນນັ້ນກໍຮັບຮູ້ລັດຖະບານຊົ່ວຄາວຂອງລາວ ແລະ ຮັບຮູ້ວ່າຊາດລາວ - ຄົນລາວກໍເປັນຄົນທີ່ມີກຽດສັກສີເໝືອນຄົນຊາດອື່ນໆ ແລະ ປາຖະໜາມີອິດສະລະພາບ, ເປັນເຈົ້າຊາຕາກໍາຂອງຕົນເອງ ແລະ ປາຖະໜາມີການພັດທະນາຕົນເພື່ອຄວາມຢູ່ດີກິນດີ ແລະ ຄວາມຈະເລີນວັດທະນາ. ຍ້ອນແນວນັ້ນພວກເຮົາຈຶ່ງຖືເອົາວັນປະກາດເອກະລາດ 12 ຕຸລາ 1945 ເປັນວັນປະຫວັດສາດທີ່ສໍາຄັນຂອງຊາດ, ເປັນວັນແຫ່ງຄວາມເອກະອ້າງທະນົງໃຈຕໍ່ຄວາມອາດຫານຊານໄຊໃນການຕໍ່ສູ້ບົນຈິດໃຈ " ຍອມຕາຍດີກວ່າເປັນຂ້ອຍຂ້າ; ຕາຍເພື່ອເອກະລາດດີກວ່າຢູ່ພາຍໃຕ້ແອກປົກຄອງຂອງຕ່າງຊາດ "; ຈາກນັ້ນມານໍ້າໃຈວັນທີ 12 ຕຸລາ ຈຶ່ງກາຍເປັນມູນເຊື້ອແຫ່ງການຕໍ່ສູ້ມີໄຊຂອງຄົນລາວຜູ້ຮັກຊາດພາຍໃຕ້ການນໍາພາຂອງພັກ, ສາມາດປົດປ່ອຍຊາດໄດ້ຢ່າງສົມບູນ ແລະ ໄດ້ສະຖາປະນາເປັນສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ ໃນວັນທີ 2 ທັນວາ ປີ 1975.

**II. ສືບຕໍ່ເສີມຂະຫຍາຍມູນເຊື້ອວັນປະກາດເອກະລາດ 12 ຕຸລາ.**

ເພື່ອສືບຕໍ່ເສີມຂະຫຍາຍມູນເຊື້ອ 12 ຕຸລາ ມະຫາໄຊ ຄະນະພັກ - ຄະນະນໍາທຸກຂັ້ນຕ້ອງເອົາໃຈໃສ່ ໂຄສະນາສຶກສາອົບຮົມການເມືອງ - ແນວຄິດ ຂອງພະນັກງານ ສະມາຊິກພັກ ແລະ ປະຊາຊົນບັນດາຊັ້ນຄົນທີ່ຂື້ນກັບການນໍາພາ - ຄຸ້ມຄອງຂອງຕົນ ເຊີດຊູນໍ້າໃຈຮັກຊາດຕິດພັນກັບການຊຸກຍູ້ການພັດທະນາໃຫ້ດໍາເນີນໄປຢ່າງຕັ້ງໜ້າ ແລະ ເປັນຂະບວນການຕໍ່ເນື່ອງດັ່ງນີ້:

❶ ໃຫ້ສືບຕໍ່ຈັດຕັ້ງການຮຽນ, ຄົ້ນຄວ້າເຊື່ອມຊຶມມະຕິກອງປະຊຸມໃຫຍ່ຂອງພັກ ໃຫ້ເລິກເຊິ່ງ - ທົ່ວເຖິງທຸກເປົ້າໝາຍ; ຫັນຄວາມຮັບຮູ້ - ເຂົ້າໃຈໃຫ້ກາຍເປັນການກະທໍາຕົວຈິງນັ້ນຄື: ການຫັນຂະຫຍາຍເປັນແຜນງານ - ເປັນໂຄງການເຄື່ອນໄຫວລະອຽດສໍາລັບແຕ່ລະໄລຍະ ໂດຍແມ່ນຄະນະພັກນໍາພາຊີ້ນໍາເຮັດໃຫ້ສອດຄ່ອງກັບໜ້າທີ່ການເມືອງ ແລະ ໜ້າທີ່ວິຊາສະເພາະຂອງແຕ່ລະກົມກອງຂະແໜງການໜ່ວຍງານ; ທັງມີການແບ່ງງານມອບໝາຍຄວາມຮັບຜິດຊອບຈັດຕັ້ງປະຕິບັດໃຫ້ຈະແຈ້ງ.

❷ ເພີ່ມທະວີຄວາມສາມັກຄີປອງດອງຂອງປະຊາຊົນບັນດາເຜົ່າພາຍໃຕ້ການນໍາພາຂອງພັກ, ເອົາໃຈໃສ່ຈໍາກັດ ແລະ ແກ້ໄຂປະກົດການຫຍໍ້ທໍ້ຕ່າງໆໃນສັງຄົມ, ສ້າງບັນຍາກາດເປັນບານມ່ວນຊື່ນ, ເຮັດໃຫ້ປະເທດຊາດມີຄວາມສະຫງົບປອດໄພ, ມີຄວາມເປັນລະບຽບຮຽບຮ້ອຍ, ເປັນປະເທດທີ່ໜ້າທ່ຽວໜ້າຊົມ.

❸ ເອົາໃຈໃສ່ວຽກງານກໍ່ສ້າງຮາກຖານການເມືອງ ແລະ ພັດທະນາຊົນນະບົດຮອບດ້ານ, ເປັນຕົ້ນແມ່ນໃຫ້ສະຫລຸບຕີລາຄາຢ່າງຖືກຕ້ອງ, ຊອກໃຫ້ເຫັນຕົວແບບດີເດັ່ນ ແລະ ປັດໄຈໃໝ່ເພື່ອເສີມຂະຫຍາຍ; ຄົ້ນຄວ້າໃຫ້ເລິກກ່ຽວກັບທິດທາງ ແລະ ມາດຕະການເພື່ອສ້າງແຂວງໃຫ້ເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ສ້າງບ້ານເປັນຫົວໜ່ວຍ



สแกนด้วย CamScanner

ພັດທະນາ ພ້ອມກັນນັ້ນກໍ່ໃຫ້ກະກຽມບົດລາຍງານ - ບົດປະກອບຄວາມເຫັນໃຫ້ກະທັດລັດ, ຈະແຈ້ງ ເພື່ອປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດທິດນຳຍຸດທະສາດດັ່ງກ່າວນັ້ນໃຫ້ເປັນຈິງ.

● ເພີ່ມທະວີຄວາມເອົາໃຈໃສ່ຕໍ່ການຄຸ້ມຄອງເສດຖະກິດ - ຄຸ້ມຄອງສັງຄົມໂດຍສະເພາະແມ່ນການຄຸ້ມຄອງຕະຫຼາດບໍ່ໃຫ້ມີການຂາດແຄນສິນຄ້າອັນຈຳເປັນຕົ້ນຕໍ ແລະ ບໍ່ໃຫ້ມີການປັ່ນປ່ວນ, ເພີ່ມທະວີການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ ເພື່ອບໍ່ໃຫ້ມີການສວຍໂອກາດກອບໂກຍກຳໄລ; ຮັບປະກັນໃຫ້ຄ່າຄອງຊີບ ແລະ ຊີວິດການເປັນຢູ່ຂອງພະນັກງານ, ທະຫານ, ຕຳຫຼວດ ແລະ ພໍ່ແມ່ປະຊາຊົນເປັນປົກກະຕິ.

- ໃຫ້ເພີ່ມທະວີຄວາມສັກສິດໃນການຄຸ້ມຄອງສັງຄົມ ຕາມລະບຽບກົດໝາຍ ໂດຍສະເພາະແມ່ນການແກ້ໄຂບັນຫາໄພສັງຄົມ ແລະ ປະກົດການຫຍໍ້ທໍ້ຕ່າງໆດ້ວຍມາດຕະການສັງລວມ ແລະ ດ້ວຍກຳລັງແຮງຂອງທົ່ວສັງຄົມ; ພ້ອມກັນນັ້ນກໍຍູ້ແຮງວຽກງານການສຶກສາ ແລະ ສາທາລະນະສຸກ ແລະ ການປະຕິບັດນະໂຍບາຍ ຕໍ່ຜູ້ມີຄຸນງາມຄວາມດີ ຕໍ່ປະເທດຊາດ ແລະ ການປະຕິວັດ; ເສີມສ້າງຄວາມເປັນທຳ ແລະ ຄຸນນະທຳໃນສັງຄົມ.

● ປະຕິບັດແນວທາງການຕ່າງປະເທດ ສັນຕິພາບ - ເອກະລາດ, ມິດຕະພາບ ແລະ ຮ່ວມມື ຢ່າງຕັ້ງໜ້າເປັນເຈົ້າການ; ເສີມຂະຫຍາຍຄວາມຮັບຜິດຊອບ ແລະ ຄວາມເປັນເຈົ້າການຂອງພວກເຮົາໃຫ້ສູງຂຶ້ນຕື່ມອີກໃນການພົວພັນຮ່ວມມືກໍຄືການຈັດຕັ້ງປະຕິບັດແຜນການ ແລະ ຂໍ້ຕົກລົງວ່າດ້ວຍການຮ່ວມມືກັບບັນດາປະເທດເພື່ອນມິດຍຸດທະສາດ, ບັນດາປະເທດອາຊຽນ, ປະເທດເພື່ອນມິດ ແລະ ອົງການຈັດຕັ້ງສາກົນ ລວມທັງຂອບການຮ່ວມມືອື່ນ.

## *ຄຳຂວັນໂຄສະນາປຸກລະດົມ*

- ນ້ຳໃຈວັນປະກາດເອກະລາດ 12 ຕຸລາ ໝັ້ນຍືນ
- ຊົມເຊີຍວັນປະກາດເອກະລາດ 12 ຕຸລາຄົບຮອບ.......ປີ ຢ່າງສຸດໃຈ.



สแกนด้วย CamScanner